# ຫນັງສືໃບລານລາວ ແລະ ວັນນະຄະດີພື້ນເມືອງ ການຕໍ່ສູ້ເພື່ອຄວາມຢູ່ລອດ[1]

2

ຣາຣັນ ຣຸນດິອຸສ

## 1. ຄວາມເປັນມາດ້ານປະຫວັດສາດວັດທະນະທັມ ສາຍສັມພັນວັດທະນະທັມຂອງລາວ ກັບພາກພື້ນບ້ານໃກ້ເຮືອນຄຽງ

ນັບແຕ່ສະໄໝບູຮານມາແລ້ວ ບັນດາຜູ້ປົກຄອງປະເທດໃນແຜ່ນດິນໃຫຍ່ ແຫ່ງອາຊີຕາເວັນອອກສຽງໃຕ້, ເຊິ່ງກໍບໍ່ຕ່າງຫຍັງກັບບັນດາຜູ້ນໍາຮ່ວມສະໄໝໃນພາກພື້ນອື່ນໆ ຂອງໂລກ, ສ່ວນໃຫຍ່ໄດ້ແຕ່ເມົາມົວ ເກາະຜິດກັນທາງດ້ານການທະຫານ ແລະ ລະເບີດສົງຄາມນອງເລືອດໃສ່ກັນ ເພື່ອບັນລຸຄວາມໄຝ່ຝັນດ້ານການເມືອງ ແລະ ອໍານາດເສດຖະກິດ. ຢ່າງໃດກໍຕາມ ໃນເວລາດຽວກັນ ປະຊາຊາດເຊິ່ງປັດຈຸບັນ ຢູ່ໃນປະເທດມຽນມາ, ໄທ, ລາວ, ຈີນ (ຢຸນນານ) ແລະກໍາປູເຈຽ ຊໍ້າຜູກພັນໝັ້ນໜຽວເຂົ້າກັນມາໄດ້ຫລາຍສະຕະວັດ ດ້ວຍຄວາມເຊື່ອສັດທາ ຢັ່ງຮາກເລິກອັນດຽວກັນ ຕໍ່ສາສະໜາພຸດ ນິກາຍເຖຣະວາດ

ລະຫວ່າງ ຄິດຕະສະຕະວັດທີ 14 ຫາກາງຄິດຕະສະຕະວັດ ທີ 16, ຊຽງໃຫມ່ ນະຄອນຫລວງແຫ່ງອານາຈັກລ້ານນາ ໄດ້ໂດດເດັ່ນຂຶ້ນໃນຖານະສູນກາງສະຖາບັນ ແຫ່ງພຸດທະສາສະໜາ ຖ້າມກາງບັນດາອານາຈັກຊາວໄຕ ແຫ່ງແຄວ້ນເໜືອ. ຊື່ສຽງຂອງສໍານັກປາລີແຫ່ງຊຽງໃໝ່ ໂດ່ງດັງ ແຜ່ຂະຈອນເຖິງທຸກເຂດແຄວ້ນ ທີ່ເປັນອານາຈັກພຸດຂອງຊາວ ໄຕ-ລາວ. ໃນນັ້ນ ມີໄຕຂຶນ ເມືອງຫລວງແມ່ນຊຽງຕຸງ, ໄຕລື້ ເມືອງຫລວງແມ່ນຊຽງຮຸ່ງ ຢູ່ສິບສອງປັນນາ, ເທົ້າເຖິງຫລວງພະບາງ ອັນເປັນນະຄອນຫລວງ ແລະ ເມືອງອື່ນໆ ຂອງອານາຈັກລາວລ້ານຊ້າງ ກັບບັນດາຫົວເມືອງສ່ວຍຂອງລ້ານຊ້າງ

ເຂົ້າໃຈວ່າ ຄໍາພີພຣະໄຕປິດົກທັງໝົດ ໄດ້ຖືກກ່າຍ ແລະແປອອກເປັນພາສາພື້ນເມືອງ. ນອກຈາກນັ້ນ ນັກປາດອາຈານຊາວພູມີພາກນີ້ ກໍຍັງໄດ້ຂຽນອັດຖະກະຖາດີກາ ອະນຸດີກາ ໂຍຊນາ ເຊິ່ງເປັນຄໍາອະທິບາຍ

[1] ບົດຄວາມນີ້ ອີງຕາມບົດປາຖະກະຖານໍາໂດຍຜູ້ຂຽນເອງ

ຄຳສັ່ງສອນຂອງພະພຸດທະເຈົ້າ ທັງມີການລິດຈະນາຕຳລາຕ່າງໆ ອັນມີລັກສະນະເປັນປະຫວັດສາດ ແລະ ອັນທີ່ກ່າວເຖິງ "ໄຕຣພູມ" ການກຳເນີດຈັກກະວານ ຫລືແມ່ນເປັນຕຳລາດ້ານຫລັກໄວຍາກອນ ການຈັດຮຽງແປຄຳ (ສັບທານຸກົມ) ແລະວິຊາຄວາມຮູ້ອື່ນໆ. ມີຄວາມເຊື່ອຢ່າງກວ້າງຂວາງວ່າ ບັນດານິທານແຫ່ງອະດີດຊາດຂອງພຣະພຸທະອົງ 50 ເລື່ອງ ຫລື ປັນຍາສະຊາດົກ ນັ້ນກໍຖືກກຳເນີດຂຶ້ນໃນໄລຍະນີ້ເອງ. ມາຮອດປັດຈຸບັນ ຍັງພົບເຫັນສຳເນົາຈົດກ່າຍຊາດົກນອກນິບາດຢ່າງມາກມາຍ (ມີທັງໝົດກວ່າ 200 ເລື່ອງ) ຢູ່ໃນທຳໄຕພາກພື້ນນີ້ ເຊັ່ນ ທາງພາກຕາເວັນອອກສຽງເຫນືອ (ພາກອິສານ) ປະເທດໄທ. ເປັນທີ່ຈະແຈ້ງວ່າ ເລື່ອງເຫລົ່ານີ້ ຖືກກ່າຍແລ້ວກ່າຍອີກ ແລະ ໄດ້ຮັບການແຈກຢາຍອອກໄປສູ່ວັດ ໃນເຂດຫ່າງໄກສອກຫລີກທີ່ສຸດ

ແນ່ນອນວ່າ ມີປັດໄຈຫລາຍອັນ ທີ່ເອື້ອອຳນວຍໃຫ້ການແລກປ່ຽນຜົນງານການຂີດຂຽນ ລະຫວ່າງຄົນລາວ ແລະຄົນໄທ. ອັນທຳອິດທີ່ຄວນຄຳນຶງເຖິງ ກໍຄືຄວາມສຳພັນອັນໃກ້ຊິດທາງດ້ານພາສາສາດລະຫວ່າງພາສາປາກ ທີ່ໃຊ້ກັນຢູ່ພາກເໜືອຂອງປະເທດໄທໃນປັດຈຸບັນ ປະເທດລາວ ແລະ ພາກຕາເວັນອອກສ່ຽງເໜືອຂອງປະເທດມຽນມາ (ພະມ່າ) ພາສາທ້ອງຖິ່ນເຫລົ່ານີ້ໃກ້ຄຽງ ແລະ ກ່ຽວຂ້ອງກັນຍິ່ງກວ່າກັບພາສາໄທພາກກາງ. ແຕ່ສິ່ງສຳຄັນກວ່ານີ້ ຄົງແມ່ນສະພາບຕົວຈິງທີ່ວ່າ ຢູ່ໃນວັດວາອາຣາມໃນເຂດທ້ອງຖິ່ນທີ່ກ່າວມາຂ້າງເທິງນີ້ ລ້ວນແຕ່ໃຊ້ອັກສອນແບບດຽວກັນ ທີ່ເອີ້ນວ່າ ອັກສອນທັມ ເຊິ່ງເປັນອັກສອນວິວັດມາຈາກ ອັກສອນມອນບູຮານຢ່າງນຶ່ງ. ກົງກັນຂ້າມກັບສະຫຍາມ ທີ່ຮັບອິດທິພົນຮິນດູຫລາຍກວ່າ ແລະເປັນແຫລ່ງທີ່ອັກສອນເກົ່າຂະແມ ຄືອັກສອນຂອມ ເຄີຍຖືກນຳໃຊ້ມາແລ້ວ ເພື່ອຂຽນຄຳສັ່ງສອນທາງສາສະໜາມາຈົນເຖິງ ທ້າຍຄິດຕະສະຕະວັດທີ 19[2]

ສາຍສຳພັນລະຫວ່າງສອງອຳນາດໃຫຍ່ ລ້ານນາ ແລະ ລ້ານຊ້າງ ໃກ້ຊິດສະໜິດແໜ້ນຍິ່ງຂຶ້ນໃນຕົ້ນຄິດຕະສະຕະວັດທີ 16 ໃນຣາຊະການຂອງພະເຈົ້າໂພທິສາລະຣາຊ (ທີ່ຂຶ້ນຄອງລ້ານຊ້າງ ແຕ່ ຄ.ສ. 1520 ເຖິງ 1550) ແລະ ແຮ່ງເພີ່ມທະວີຂຶ້ນອີກ ເມື່ອພະໂອຣົດຂອງພະອົງ ເຈົ້າຊາຍ ໄຊຍະເຊດຖາທິຣາດ ໄດ້ຮັບເລືອກຂຶ້ນຄອງຣາຊະບັນລັງລ້ານນາ ທີ່ ນະຄອນຊຽງໃໝ່ ໃນປີ 1548

---

2 ແມ່ນຢູ່ໃນຣັດຊະການ ເຈົ້າຊີວິດ ຈຸລາລົງກອນ (1868-1910) ທີ່ອັກສອນໄທ ໄດ້ຖືກນຳໃຊ້ເປັນເທື່ອທຳອິດ ແທນອັກສອນຂອມ ເພື່ອພິມປຶ້ມພະໄຕປິດົກພາສາປາລີ ສະບັບສະຫຍາມ

ບັນທຶກທາງປະຫວັດສາດເລົ່າວ່າ ເມື່ອພຣະເຈົ້າໄຊຍະເຊດຖາທິຣາດ ສະເດັດກັບເມືອນະຄອນຫລວງພະບາງນັ້ນ ພະອົງໄດ້ຊົງນຳເອົາວັດຖຸມີຄ່າຫລາຍຢ່າງມາພ້ອມ ໃນນັ້ນ ມີໜັງສືໃບລານຈຳນວນມະຫາສານດ້ວຍ

ຕັ້ງແຕ່ນັ້ນມາ ຄົງໄດ້ມີການແລກປ່ຽນທາງດ້ານວັດທະນະທັມກັນຢ່າງບໍ່ຢຸດຢ່ອນ ລະຫວ່າງສອງແຄວ້ນ ແລະ ສືບຕໍ່ດຳເນີນມາເປັນຢ່າງດີ ຈົນຮອດຄິດຕະສະຕະວັດທີ 20. ຂໍຍົກພຽງຕົວຢ່າງດຽວມາໃຫ້ເບິ່ງ: ໃນປີ ຄ.ສ. 1835/36 ພຣະມະຫາເຖຣະ ກັນຈະນະ ແຫ່ງວັດສູງເໜັ້ນ ຢູ່ແຂວງແພຣ່ປະເທດໄທໃນປັດຈຸບັນ ພ້ອມບັນດາສິດສານຸສິດໄດ້ມາຍັງຫລວງພະບາງ ເພື່ອຄັດກ່າຍເອົາໜັງສືຜູກທັມມະຈຳນວນມະຫາສານ (ຫລາຍກວ່າ 2,800 ຜູກ) ເຊິ່ງຫລາຍເລື່ອງ ເຂົ້າໃຈວ່າບໍ່ມີຢູ່ໃນລ້ານນາມາດົນແລ້ວ[3]

ດັ່ງນັ້ນ ອາດຈະພໍເອີ້ນເຂດທີ່ກ່າວມາຂ້າງເທິງນັ້ນວ່າ ເປັນເຂດຮ່ວມປະເພນີ ວັດທະນະທັມດຽວກັນ ຄືອົງເຂດອັກສອນທັມ, ຫລືເມື່ອເວົ້າເຖິງຄວາມສຳພັນອັນສະໜິດແໜ້ນທີ່ສຸດ ລະຫວ່າງພາສາລ້ານນາ ຫລືທີ່ເອີ້ນກັນວ່າພາສາໄທຍວນ ຫລືຄຳເມືອງ ກັບພາສາລາວ, ພວກເຮົາອາດເອີ້ນໄດ້ອີກວ່າເປັນ "ອົງເຂດວັດທະນະທັມລາວໄທຍ"[4]

---

3 ໃນຈຳນວນໜັງສືຫາຍາກ ທີ່ຂຽນເປັນພາສາປາລີ ແລະ ນິໄສ ນັ້ນ ເພິ່ນໄດ້ນຳເອົາໜັງສື ປັນຍາສະຊາດົກຄົບຊຸດໄປໄວ້ຢູ່ເມືອງແພຣ່ ເຊິ່ງຍັງຖືກຮັກສາໄວ້ເປັນຢ່າງດີທີ່ວັດສູງເໜັ້ນ ເທົ້າເຖິງປະຈຸບັນ ໂດຍອີງໃສ່ໜັງສືສະບັບທີ່ກ່າຍຈາກຫລວງພຣະບາງນີ້ ແລະສົມທົບໃສ່ກັບເອກະສານອື່ນໆ ຈາກລ້ານນາ ຈຶ່ງໄດ້ມີການຈັດພິມໜັງສືປັນຍາຊາດົກສະບັບອັກສອນສະຫຍາມຂຶ້ນສະບັບນຶ່ງ ໂດຍການສະໜັບສະໜຸນຂອງມູນນິທິໂຕໂຢຕາ ແລະມີຄະນະນັກວິໄຈ ຈາກມະຫາວິທະຍາໄລຊຽງໃໝ່ ພາກວິຊາພາສາໄທ ເຊັ່ນ ສ. ດຣ. ອຸດົມ ຣຸ່ງເຮືອງສີ ແລະ ມື້ລາງຮອງສາສະດາຈານບຳເພັນ ຣະວິນ ແລະ ສ. ດຣ. ຣະຣັນ ຣຸນດີອຸສ. ການຈັດພິມສຳເລັດແລ້ວໃນປີ 1999. ສຳລັບຂໍ້ມູນລະອຽດກ່ຽວກັບຄູບາກັນຈະນະ ແລະ ເອກະສານຄັດກ່າຍມາທີ່ວັດວິຊຸນ ຫລວງພຣະບາງ ໃຫ້ເບິ່ງ ຣາຣັນ ຣຸນດີອຸສ "The Colophons of thirty Pali manuscripts from Northern Thailand." Journal of the Pali Text Society, XIV, (1990), pp.1-173, ໂດຍສະເພາະຢ່າງຍິ່ງ 34-36

4 ແມ່ນແຕ່ມາເຖິງກາງສະຕະວັດທີ 20 ແລ້ວ ປະຊາຊົນທາງພາກເໜືອຂອງໄທ ກໍຍັງຖືກຄົນສະຫຍາມເອີ້ນວ່າລາວ ຫລືລາວພຸງດຳ (ເຊິ່ງໝາຍເຖິງ ປະເພນີສັກລາຍໃສ່ທ້ອງຂອງພວກຜູ້ຊາຍລ້ານນາ) ຫລືເອີ້ນວ່າ "ລາວຕາເວັນຕົກ" ໂດຍນັກຄົ້ນຄວ້າຝຣັ່ງ ເຊັ່ນທ່ານ ຊອກຊ໌ ເຊແດສ໌ ເປັນຕົ້ນ. ຕົວຢ່າງ ຊື່ເອກະສານຄົ້ນຄວ້າສະບັບຕົ້ນໆ: "ເອກະສານວ່າດ້ວຍ ປະຫວັດສາດ ການເມືອງ ແລະສາສະໜາຂອງລາວຕາເວັນຕົກ" ທີ່ສຶກສາເນື້ອໃນຈົດໝາຍເຫດພື້ນເມືອງລ້ານນາ ເປັນພາສາປາລີ" ຫລື ເບິ່ງວຽກງານອັນສຸດທ້າຍຂອງເພິ່ນ: ໂຣມບັນຊີ (ແຄດຕາລັອກ) ເອກະສານພາສາປາລີ ລາວ ແລະ ສະຫຍາມ ຂອງປະເທດໄທ (Copenhagen 1966) ເຊິ່ງໃນນັ້ນ ເອກະສານທັງໝົດ ທີ່ອ້າງວ່າເປັນເອກະສານລາວ ແມ່ນມາຈາກລ້ານນາທັງສິ້ນ

## 2. ການຄົ້ນຄວ້າ ການປົກປັກຮັກສາ ແລະ ການເຜີຍແຜ່ ວັນນະຄະດີລາວ ເຖິງປີ 1988: ຮູບພາບລວມໂດຍຫຍໍ້

ວິຊາອາຊີອາຄະເນສຶກສາ ເປັນວິຊາການທີ່ຍັງໃໝ່ສົມຄວນ. ມັນເລີ່ມຂຶ້ນເມື່ອສະຕະວັດ ທີ 19 ແຕ່ການຄົ້ນຄວ້າອັນຈິງຈັງກ່ຽວກັບລາວນັ້ນ ຫາກໍຕັ້ງແຮກເມື່ອຕົ້ນສະຕະວັດທີ 20 ນີ້ເອງ ຄືບໍ່ພໍເທົ່າໃດປີ ຫລັງຈາກທີ່ປະເທດລາວ ຖືກຈັດເຂົ້າເປັນສ່ວນນຶ່ງຂອງອິນດູຈີນຝຣັ່ງ. ສ່ວນໃຫຍ່ແລ້ວແມ່ນ ນັກຄົ້ນຄວ້າຝຣັ່ງ ທີ່ເປັນຜູ້ແຜ້ວຖາງວຽກງານຄົ້ນຄວ້າກ່ຽວກັບປະເທດລາວ. ຂ້າພະເຈົ້າຂໍຍົກຊື່ຂອງບາງທ່ານດັ່ງນີ້: ທ່ານ ອັງຣີ ປາກມັງເຈ, ທ່ານຫລຸຍ ຟີໂນ ຫລື ທ່ານຊອກຊ໌ ເຊແດສ໌, ເຊິ່ງວຽກງານອັນສຳຄັນຂອງພວກເພິ່ນຍັງຄົງເປັນແຫລ່ງຂໍ້ມູນສູງຄ່າມາເທົ້າເຖິງປັດຈຸບັນ. ຕົວຢ່າງ ວຽກງານການຄົ້ນຄວ້າ ຂອງທ່ານຫລຸຍ ຟີໂນ ກ່ຽວກັບວັນນະຄະດີລາວ ແຕ່ປີ 1917 ເຊິ່ງຖ້າເບິ່ງໃນທຸກມື້ນີ້ ຄືວ່າຫລ້າຫລັງ ໃນບາງດ້ານກໍຍັງໃຫ້ຮູບພາບໂດຍກວ້າງໆ ທີ່ເປັນປະໂຫຍດກ່ຽວກັບວັນນະຄະດີເກົ່າຂອງລາວ ແລະ ບັນຊີລາຍຊື່ໜັງສືວັນນະຄະດີລາວທີ່ເປັນເອກກະສານແບບທ້າຍບົດຄົ້ນຄວ້າ ກໍຍັງເປັນເຄື່ອງມືອັນມີ ປະໂຫຍດສຳລັບນັກຄົ້ນຄວ້າ ເທົ້າເຖິງປັດຈຸບັນ[5] ອາດສະຫລຸບໄດ້ວ່າ ວຽກງານການສຳຫລວດ ແລະ ການຂຶ້ນບັນຊີໜັງສື ເຊິ່ງເລີ່ມຕົ້ນເມື່ອທ້າຍສະຕະວັດທີ 19 ຕໍ່ຕົ້ນສະຕະວັດທີ 20 ນັ້ນ ສ່ວນໃຫຍ່ແມ່ນເກີດຈາກຄວາມຄິດແຮກກໍ່ຂອງຝ່າຍຝຣັ່ງເກືອບທັງນັ້ນ

ການສຳຫລວດໜັງສືໃບລານຄັ້ງສຸດທ້າຍ ແລະ ສຳຄັນກວ່າໝູ່ ກ່ອນການປ່ຽນແປງລະບົບການເມືອງ ດຳເນີນຢູ່ພາຍໃຕ້ການຊີ້ນຳຂອງທ່ານ ປີແອ ແບກນາຣ໌ ລາຟົງ ໃນປີ 1959, ກວມເອົາ 83 ວັດ ໃນນັ້ນ 30 ວັດ ຢູ່ໃນກະໂຕເມືອງຫລວງພະບາງ, 25 ວັດຢູ່ວຽງຈັນ ແລະ 45 ວັດ ຢູ່ຈຳປາສັກ. ວຽກນີ້ໄດ້ຮັບຜົນສືບມາແຕ່ການສຳຫລວດຄັ້ງກ່ອນຫລາຍໆຄັ້ງ ເຊັ່ນວ່າ ວຽກຂຶ້ນບັນຊີຢູ່ຫລວງພຣະບາງ ດຳເນີນໂດຍ ອັງຣີ ເດດີເຢ ເຊິ່ງເສຽຊີວິດກ່ອນຈະສຳເລັດວຽກງານ ແລະ ແນ່ນອນ "ບັນຊີລວມໃບລານລາວ" ແຕ່ປີ 1917 ຂອງທ່ານ ຫລຸຍ ຟີໂນ ທີ່ໄດ້ກ່າວມາແລ້ວ. ບັນຊີນີ້ ບັນຈຸເອົາແຕ່ເອກະສານທີ່ຂຽນຂຶ້ນຢູ່ໃນວັດ ທີ່ຫລວງພະບາງ

ພາຍຫລັງຈັດໝວດໝູ່ ຂໍ້ມູນເກັບກຳຈາກສາມແຂວງນີ້ແລ້ວ *ລາຟົງ* ກໍສະຫລູບອອກມາວ່າ ຈາກຜົນສຳຫລວດ ຄື ຈາກໜັງສືໃບລານທັງໝົດ 1,616 ເລື່ອງນັ້ນ ນອກຈາກທີ່ມີຈຳນວນອ່າວຫລາຍເລື່ອງທາງພຸທະສາສະໜາແລ້ວ (ອະພິທັມ, ຊາດົກ ຫລື ຄາຖາຕ່າງໆ) ມີບໍ່ກາຍ 32 ເລື່ອງ ທີ່ທັງສາມພາກນີ້

---

[5] ເບິ່ງ ໃບຂ່າວ ຂອງ ສຳນັກບູຣະພາທິດ ແຫ່ງຝຣັ່ງ (BEFEO) XVII, 1917

ມີຄືກັນ! ໂດຍອີງໃສ່ສິ່ງຄົ້ນພົບນີ້ ຂໍ້ສະຫລຸບອັນນຶ່ງໄດ້ຖືກສະເໜີຂຶ້ນ ແລະຢັ້ງຢືນວ່າ ນອກຈາກຜົນງານຕົ້ນຕໍທາງພຸທະສາສະໜາແລ້ວ ລາວບໍ່ມີວັນນະຄະດີເນື້ອນຶ່ງເນື້ອດຽວ, ແຕ່ຫາກ "ມີວັນນະຄະດີຢູ່ 3 ກຸ່ມ ເຊິ່ງແຜ່ກະຈາຍຢູ່ໃນພາກພື້ນນີ້"[6]. ຄົງຈະເປັນໜ້າສົນໃຈ ທີ່ຈະສຶກສາວ່າ ຂໍ້ສະຫລຸບດັ່ງກ່າວ ຍັງຈະເປັນຕາເຊື່ອຖືໄດ້ສໍ່າໃດ ເມື່ອນໍາມາສົມທຽບກັບຂໍ້ມູນທີ່ໄດ້ມາໃນປັດຈຸບັນ

ເປັນເວລາດົນພໍສົມຄວນ ກ່ອນທີ່ຄົນລາວເອງຈະຫັນມາພະຍາຍາມຮັກສາ ມໍລະດົກວັນນະຄະດີຂອງຕົນ ແລະ ຫັນມາເອົາຈິງເອົາຈັງກັບການສຶກສາຄົ້ນຄວ້າວັດທະນະທັມ ແລະ ວັນນະຄະດີ. ຢ່າງໃດກໍດີໃນລະຫວ່າງການຟື້ນຟູວັດທະນະທັມ ລະຫວ່າງປີ 1928-1940 ນັ້ນ ກໍໄດ້ມີຄວາມພະຍາຍາມອັນຍິ່ງໃຫຍ່ຂອງບັນດາປັນຍາຊົນ ແລະ ຝ່າຍບໍລິຫານ ພາຍໃຕ້ການຊີ້ນໍາຂອງເຈົ້າເພັດຊະຣາດ ແລະ ການຊ່ອຍເຫລືອຂອງນັກຄົ້ນຄວ້າຕ່າງປະເທດ ເພື່ອຈັດຕັ້ງການປະຕິສັງຂອນວັດວາອາຣາມ ແລະ ສາສະນະສະຖານຕ່າງໆ. ຍິ່ງໄປກວ່ານີ້ ກໍໄດ້ມີການເກັບກໍາເຕົ້າໂຮມ ແລະ ຂຶ້ນທະບຽນໜັງສືໃບລານຈໍານວນຫລວງຫລາຍ ແລະຄັດກ່າຍອອກໄວ້ຈໍານວນນຶ່ງ. ຜົນງານເລືອກເຟັ້ນຫລາຍເລື່ອງໄດ້ຮັບການລິດຈະນາ ເປັນອັກສອນສະໄໝໃໝ່ ແລະ ຈັດພິມເຜີຍແຜ່ໂດຍ ພຸດທະບັນດິດສະພາຈັນທະບຸລີລາວ ແລະ ຈັດສົ່ງແຈກຢາຍໄປໃຫ້ວັດທົ່ວປະເທດ

ຢ່າງໃດກໍດີ ໃນທັງໝົດນັ້ນ ເຖິງວ່າຈະມີບຸກຄົນເຊັ່ນ ເຈົ້າເພັດຊຣາດ, ທ່ານຫຍຸຍ ອະໄພ ຫລື ມະຫາສີລາ ວີຣະວົງສ໌ ທີ່ໄດ້ເອົາໃຈໃສ່ເຮັດ ແຕ່ກໍເຫັນໄດ້ວ່າ ການສຶກສາຄົ້ນຄວ້າວັນນະຄະດີທ້ອງຖິ່ນແບບວິຊາການ ບໍ່ໄດ້ຮັບຄວາມສົນໃຈຈາກຂັ້ນນໍາລາວ ເທົ່າກັບຄວາມສົນໃຈທີ່ພວກເພິ່ນມີຕໍ່ຄວາມສີວິໄລ ແລະ ວັດທະນະທັມຝຣັ່ງ

ແນ່ນອນວ່າ ແມ່ນການປ່ຽນແປງລະບົບການສຶກສາ ເຊິ່ງເນັ້ນແນໃສ່ການສຶກສາສາມັນ ເປັນປັດໄຈຕົ້ນຕໍກວ່າໝູ່ ທີ່ເຮັດໃຫ້ສະຖານະພາບ ແລະ ພາລະກິດຂອງວັດ ໃນຖານະເປັນຕົວແທນຕາມປະເພນີໃນເລື່ອງຮໍ່າຮຽນ ແລະໃຫ້ຄວາມຮູ້ ຕ້ອງຕົກຢູ່ໃນພາວະລົງຄ້ອຍໄປ. ການສຶກສາມໍລະດົກວັນນະຄະດີ ຖືກເບິ່ງຕໍ່າຕ້ອຍກວ່າທີ່ເຄີຍເປັນມາໃນອະດີດ. ການຫລຸດຈໍານວນຫົວເລື່ອງ ທີ່ພົວພັນກັບສາສະໜາພຸດ ຢູ່ໃນຫລັກສູດ

---

[6] On peut donc écrire que mis a part les ouvrages bouddhiques de base, il n'existe pas une littérature homogène, mais trois littératures dont la diffusion est essentiellement régionale. ເບິ່ງ P-B. Lafont, Inventaire des manuscrits des pagodas du Laos, BEFEO, LIX, Paris 1959, ຈາກປຶ້ມ Institut National de Recherche Artistique et Littéraire (ed.), "ສໍາມະນາໃບລານທົ່ວປະເທດ ຄັ້ງທີນຶ່ງ, ວຽງຈັນ 1989", ໜ້າ 288 ແລະ 430

ຂອງໂຮງຮຽນ ກໍມີສ່ວນເຮັດໃຫ້ເກີດຄວາມເມີນເສີຍ ທີ່ນັບມື້ນັບທະວີຂຶ້ນ ຕໍ່ໜັງສືໃບລານທີ່ມີຮຽນໄວ້ຢູ່ໃນຫໍໄຕ ວັດຕ່າງໆ

ສຳລັບວັນນະນະຄະດີບູຮານນັ້ນ ຈົນມາເຖິງກາງຊຸມປີ 1950 ພາຍຫລັງໄດ້ຮັບເອກະຣາດທາງດ້ານການເມືອງແລ້ວ ຈຶ່ງໄດ້ມີການສ້າງຕັ້ງສະຖາບັນແຫ່ງຊາດບ່ອນທຳອິດຂຶ້ນ ທີ່ວຽງຈັນ ຄື ກົມວັນນະຄະດີ ເພື່ອຮັບຜິດຊອບກິດຈະການດ້ານວັນນະຄະດີ ໂດຍສະເພາະ ການຈັດພິມວັນນະຄະດີບູຮານເລື່ອງເອກ ອອກເປັນອັກສອນລາວສະໄໝໃໝ່. ໃນປີຕໍ່ໆມາ ຈົນເຖິງປີ 1975 ມີການຈັດພິມ ວັນນະຄະດີບູຮານ ບໍ່ຕ່ຳກວ່າ 70 ເລື່ອງ ອອກມາຮັບໃຊ້ມະຫາຊົນເປັນເທື່ອທຳອິດ

ຖ້າພິຈາລະນາດ້ວຍສາຍຕານັກວິຊາການປັດຈຸບັນ ບົດວັນນະຄະດີເຫລົ່ານີ້ ສ່ວນຫລາຍໄດ້ຮັບການຈັດພິມອອກດ້ວຍຄຸນນະພາບທີ່ບໍ່ທັນເປັນໜ້າພໍໃຈ. ຍ້ອນວ່າຕົ້ນສະບັບບໍ່ໄດ້ຜ່ານການກວດກາ ວິນິດໄສພຽງພໍ ຄືດັ່ງທີ່ປະຕິບັດກັນເປັນປົກກະຕິ ຢູ່ໃນຫລາຍປະເທດເອີຣົບ ເຊັ່ນ ຝຣັ່ງ, ອັງກິດ, ເຢີຣະມັນ. ໃນປະເທດເຫລົ່ານັ້ນ ຜົນງານທີ່ສຳຄັນລະດັບຊາດ ຕ້ອງໄດ້ຮັບການຈັດພິມຢ່າງຖືກຫລັກວິຊາການ ແລະ ຖີ່ຖ້ວນທີ່ສຸດ[7]

ແຕ່ຢ່າງໃດກໍຕາມ, ການຈັດພິມວັນນະຄະດີບູຮານລາວ ກໍຍັງຊີ້ໃຫ້ເຫັນວ່າ ປະເທດເອກະລາດໃໝ່ ປະເທດນຶ່ງ ຊຶ່ງເມື່ອປຽບໃສ່ກັບປະເທດບ້ານໃກ້ເຮືອນຄຽງ ກໍນັບວ່ານ້ອຍຫລາຍ ແຕ່ຫາກສາມາດເອກອ້າງມໍລະດົກວັນນະຄະດີອັນອຸດົມສົມບູນຂອງຕົນໄດ້. ນອກຈາກນີ້ ການຈັດພິມບັນດາມະຫາກາບອັນຍອດຍິ່ງ ອອກເປັນອັກສອນລາວສະໄໝໃໝ່ ເຊັ່ນ ຈຳປາສີ່ຕົ້ນ ສັດທະນາມ ຫລື ສຽວສະຫວາດ ເຖິງວ່າຈະຍັງບໍ່ທັນສັກປານໃດນີ້ ກໍຫາກພຽງພໍທີ່ຈະເຮັດໃຫ້ມີຄວາມເຂົ້າໃຈໂດຍພື້ນຖານໃນເນື້ອເລື່ອງຢູ່, ບໍ່ວ່າຈະເວົ້າຢ່າງໃດ ນິທານເຫລົ່ານີ້ ກໍເປັນທີ່ຮູ້ຈັກດີໃນໝູ່ຄົນລາວສ່ວນໃຫຍ່ ທີ່ໄດ້ຍິນໄດ້ຟັງມາຈາກຄຳເທດສະໜາ ຂອງພະສົງຢູ່ວັດ ຫລື ໝໍອັບໝໍລຳ ໃນໂອກາດງັນບຸນຕ່າງໆ ເຊັ່ນ ງັນເຮືອນດີ ເຮືອນດອງ ຫລື ບຸນບ້ານ

ໃນຂະນະດຽວກັນ ເມື່ອເບິ່ງຫລັກສູດໃນສະຖາບັນການສຶກສາຊັ້ນສູງ ຫລືວ່າໂຮງຮຽນມັດທະຍົມ ແລະປະຖົມແລ້ວກໍພົບວ່າ ວິຊາວັນນະຄະດີບູຮານລາວ ຖືກນຳສະເໜີຢ່າງເບົາບາງຫລາຍ

---

[7] ແນວໃດກໍດີ ພວກເຮົາບໍ່ຄວນລືມວ່າ ການຈັດພິມທຳນອງດຽວກັນນີ້ ກໍເປັນທີ່ປະຕິບັດກັນຢ່າງເປັນປະຈຳ ຢູ່ປະເທດໄທ ແລະ ປະເທດໃກ້ຄຽງອື່ນໆ ໃນສະໄໝນັ້ນ ແລະ ແມ່ນແຕ່ໃນທຸກມື້ນີ້ ກໍຍັງພົບເຫັນຢູ່

## 1988-2003: ຄວາມຟົດຟື້ນຄັ້ງໃໝ່ ສຳລັບການປົກປັກຮັກສາ, ການເຜີຍແຜ່ ແລະ ການຄົ້ນຄວ້າ

ໃນປາງສົງຄາມທຳລາຍລ້າງ ຄັ້ງທີ່ໜັກໜ່ວງທີ່ສຸດໃນປະຫວັດສາດລາວ, ວັດວາອາຮາມຈຳນວນຫລວງຫລາຍ ພ້ອມດ້ວຍຫໍໄຕທີ່ເກັບມ້ຽນໜັງສືອັນຫາຄ່າບໍ່ໄດ້ ຖືກລະເບີດວອດວາຍໄພ້ຖົ້ມໝົດ[8] ໃນຊຸມປີຕໍ່ໆມາພາຍຫລັງການປະກາດສ້າງຕັ້ງປະເທດເປັນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ, ປະເທດນີ້ກໍໄດ້ຜະເຊີນໜ້າກັບສະພາວະການອັນຫຍຸ້ງຍາກມະຫາສານ. ບັນຫາເຫລົ່ານີ້ ຍິ່ງຊໍ້າຕື່ມ ສະຖານະພາບອັນຕໍ່າຕ້ອຍຂອງໜັງສືຜູກໃບລານໃຫ້ຮ້າຍຮຶນໄປອີກ ຈົນເຖິງຂັ້ນວ່າ ມໍລະດົກວັນນະຄະດີ ສ່ວນທີ່ເຫລືອລອດຈາກໄພສົງຄາມນີ້ ຕົກຢູ່ໃນພາວະຖືກອິມຂູ່ວອດວາຍ

ມາເຖິງເດືອນມີນາ ປີ 1988, ດ້ວຍການອຸປະຖຳ ຂອງມູນນິທິໂຕໂຢຕາ ປະເທດຍີ່ປຸ່ນ ກອງປະຊຸມໃຫຍ່ໄດ້ໄຂຂຶ້ນທີ່ວຽງຈັນ, ພະສົງ ຄູບາ ອາຈານ ຄະຣາວາດ ຜູ້ມີຊື່ສຽງໃນທົ່ວປະເທດ ໄດ້ຮັບເຊີນເຂົ້າມາຮ່ວມເພື່ອສົນທະນາປຶກສາກັນ ໃນເລື່ອງ ການປົກປັກຮັກສາໜັງສືຢູ່ທ້ອງຖິ່ນຊຸມຊົນ ໂດຍຝ່າຍປົກຄອງ ແລະການແລກປ່ຽນຄວາມຄິດເຫັນຫລາຍອັນ ວ່າຈະຕ້ອງເຮັດຫຍັງແດ່ ເພື່ອກອບກູ້ໜັງສືທີ່ເຫລືອລອດ ແລະເກືອບຈະຖືກລືມຖິ້ມຢູ່ໃນຫໍໄຕໄປແລ້ວນີ້ໄວ້ໄດ້

ຜົນຮັບຈາກກອງປະຊຸມຄັ້ງນີ້ ກໍຄື ໄດ້ມີການຂຶ້ນໂຄງການ "ການສຳຫລວດຂຶ້ນບັນຊີໜັງສືຜູກໃບລານຢູ່ 6 ແຂວງໃນລາວ" ໂດຍການແຮກລົງມືຂອງ ວັດທະນະທັມ ແລະການສະໜັບສະໜູນຂອງ ມູນນິທິໂຕໂຢຕາ, ນາງ ດາຣາ ກັນລະຍາ ໄດ້ຮັບແຕ່ງຕັ້ງໃຫ້ເປັນຫົວໜ້າໂຄງການ, ມີຮອງສາສະດາຈານ ສົມໝາຍ ເປຣມຈິດຈາກມະຫາວິທະຍາໄລຊຽງໃໝ່ ມາເປັນຜູ້ຊ່ອຍໂຄງການ ໃນນາມທີ່ປຶກສາຕ່າງປະເທດ. ໃນລະຍະດຳເນີນໂຄງການນີ້ (ລະຫວ່າງ1988-1994) ເພິ່ນໄດ້ຂຶ້ນບັນຊີໜັງສືທີ່ພົບເຫັນປະມານ 128,000 ຜູກ ຢູ່ 250 ວັດໃນເຂດກຳແພງນະຄອນວຽງຈັນ, ແຂວງວຽງຈັນ, ແຂວງຫລວງ ພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະຈຳປາສັກ

---

[8] ພວກເຮົາຫາກໍໄດ້ຮູ້ໃນປີ 2004 ນີ້ວ່າ ໝົດທົ່ວແຂວງຊຽງຂວາງ ມີພຽງແຕ່ບ້ານດຽວເທົ່ານັ້ນ ທີ່ບໍ່ຖືກລະເບີດ ທັງວັດ ແລະ ຫໍໄຕ ກໍຍັງຢູ່

ໃນເດືອນກັນຍາ 1992 ໂຄງການໃໝ່ອີກໂຄງການນຶ່ງ ໄດ້ເລີ່ມຕົ້ນຂຶ້ນ ນັ້ນຄື: ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມື ລາວ-ເຢີຣະມັນ. ອີກຄັ້ງນຶ່ງ ໂຄງການຮ່ວມມືອັນນີ້ ໄດ້ດຳເນີນການຢູ່ພາຍໃຕ້ການຊີ້ນຳຂອງ ກະຊວງຖະແຫລງຂ່າວ ແລະ ວັດທະນະທັມ ແລະກໍແມ່ນ ນາງດາຣາ ກັນລະຍາ ເປັນຫົວໜ້າໂຄງການອີກ. ຈົນມາເຖິງເວລາທີ່ໂຄງການນີ້ ຖືກສົ່ງມອບໃຫ້ຫໍສະໝຸດແຫ່ງຊາດ ໃນປີ 1997 ນາງ ກົງເດືອນ ເນດຕະວົງ ຈຶ່ງມາເປັນຫົວໜ້າໂຄງການ

ໂຄງການນີ້ ສ້ຽງສຸດລົງຢ່າງເປັນທາງການ ໃນທ້າຍປີ 2002 ແລະໃນປີດຽວກັນນີ້ ຜົນງານທັງໝົດກໍສົ່ງມອບໃຫ້ ຫໍສະໝຸດແຫ່ງຊາດ. ໃນໄລຍະ10 ປີ ແຫ່ງການດຳເນີນໂຄງການນີ້ ມີວັດ 830 ແຫ່ງ ໃນ 17 ແຂວງ ໄດ້ຮັບການສຳຫລວດ ແລະ ຂຶ້ນບັນຊີໃບລານ ທີ່ມີຢູ່ໃນນັ້ນທັງໝົດ 368,000 ຜູກ. ໄດ້ມີການຮັກສາ ແລະ ຂຶ້ນບັນຊີຢູ່ກັບທີ່ ແລະ ໄດ້ມີການສ້າງຕັ້ງແຫລ່ງຂໍ້ມູນຂັ້ນສູນກາງແຫ່ງນຶ່ງ. ອັນສຳຄັນກວ່າໝູ່ ສຳລັບການສຶກສາແຫລ່ງຂໍ້ມູນຂັ້ນປະຖົມຂອງລາວ ອາດຈະແມ່ນຊຸດສະສົມໄມໂຄຼຟິມ ທີ່ບັນທຶກໜັງສືທີ່ເລືອກເຟັ້ນແລ້ວປະມານ 1.000 ກໍ້, ກໍ້ນຶ່ງຍາວ 30 ແມັດ. (ລາຍລະອຽດ ເບິ່ງເອກະສານ ນາງດາຣາ)[9]

ດັ່ງນັ້ນ ພວກເຮົາພໍເວົ້າໄດ້ວ່າ ດ້ວຍພາລະກິດທີ່ດຳເນີນມາເປັນເວລາສິບຫ້າປີນັ້ນ, ມໍລະດົກວັນນະຄະດີລາວທີ່ມີຕົວຕົນເຫລືອລອດຢູ່ ໄດ້ຮັບການກອບກູ້ແລ້ວ ເຖິງວ່າໃນໂຕຈິງ ຍັງມີວັດອີກປະມານ 70% ບໍ່ທັນໄດ້ຮັບການສຳຫລວດປົກປັກຮັກສາ ຈາກໂຄງການນີ້ກໍຕາມ[10]. ຍິ່ງໄປກວ່ານີ້ ອຸປະສັກພື້ນຖານສອງອັນ ທີ່ຖ່ວງດຶງການສຶກສາແຫລ່ງຂໍ້ມູນ ຜົນງານການຂຽນໃນລາວ ກໍໄດ້ຮັບການແກ້ໄຂແລ້ວ ນັ້ນຄື:

---

9 ຄວາມຈິງ ໂຄງການນີ້ ອາດຖືກເບິ່ງຄືວ່າ ເປັນການຂະຫຍາຍຜົນໂດຍກົງຂອງໂຄງການ ປະຕິບັດຢູ່ໃນພາກເໜືອຂອງປະເທດໄທ ໃນຊຸມປີ 1987-1991 ໂຄງການອະນຸຮັກຄຳພີໃບລານລ້ານນາ ເຊິ່ງປະສານງານໂດຍມະຫາວິທະຍາໄລຊຽງໃໝ່ ສູນສົ່ງເສີມສິລະປະວັດທະນະທັມ (ໂດຍມີ ດຣ. ພ່ອມຣາຊະວົງ ຮຸດຈະຢາ ອາພາກອນ ເປັນຜູ້ອຳນວຍການ) ແລະ ໂຄງການນີ້ ກໍໄດ້ຮັບການສະໜັບສະໜູນຈາກ ກະຊວງການຕ່າງປະເທດເຢີຣະມັນ ໂດຍຜ່ານແຜນງານການຊ່ອຍເຫລືອ ທາງດ້ານວັດທະນະທັມ

10 ນັ້ນບໍ່ໄດ້ໝາຍຄວາມວ່າ ບໍ່ມີຄວາມຈຳເປັນໃດໆອີກ ທີ່ຈະສືບຕໍ່ວຽກງານການປົກປັກຮັກສາ; ກົງກັນຂ້າມ "ສູນປົກປັກຮັກສາໃບລານ" ທີ່ສ້າງຕັ້ງຂຶ້ນຢູ່ຫລວງພະບາງ, ນະຄອນຫລວງວຽງຈັນ, ສະຫວັນນະເຂດ ແລະປາກເຊ ເຊິ່ງນອນຢູ່ໃນໜ້າວຽກຂອງໂຄງການໃບລານ ການຮ່ວມມື ລາວ-ເຢີຣະມັນ ນັ້ນ ນອກຈາກຈະເປັນຕົວແທນຫ້ອງສະໝຸດຕົວຢ່າງແລ້ວ ກໍຍັງມີໜ້າທີ່ດຳເນີນກິດຈະກຳກ່ຽວກັບການປົກປັກຮັກສາ ໃນອະນາຄົດ ນຳອີກດ້ວຍ

(1) ການຂາດເຂີນບັນຊີທີ່ເຊື່ອຖືໄດ້ ແລະ ທັນການ ຂອງຫໍໄຕຢູ່ໃນແຕ່ລະແຂວງ ທັງ 17 ແຂວງ. ໂຊກດີ, ບັດນີ້ ເອກະສານດັ່ງກ່າວໄດ້ຖ່າຍໄມໂຄຼຟິມໄວ້ໝົດແລ້ວ

(2) ຄວາມຫຍຸ້ງຍາກ ໃນການເຂົ້າເຖິງແຫລ່ງຂໍ້ມູນເອກະສານເຫລົ່ານີ້

ນະທີ່ນີ້ ຈະຕ້ອງເວົ້າເຖິງຄວາມສຳເລັດຕົ້ນຕໍບາງອັນ ໃນວົງການຄົ້ນຄວ້າ ແລະເຜີຍແຜ່ວັນນະຄະດີພື້ນເມືອງ ເຊິ່ງບັນລຸໄດ້ໃນລະຫວ່າງນຶ່ງທົດສະວັດເຄິ່ງມານີ້ ໂດຍສັ້ນໆ ດັ່ງນີ້ :

ຜົນງານວັນນະຄະດີບູຮານອັນໂດ່ງດັງກວ່າໝູ່ ທີ່ໄດ້ຮັບການຈັດພິມຄືນ ພ້ອມດ້ວຍຄຳແປເປັນຄວາມທຳມະດາ ແລະ ອະທິບາຍແບບກວ້າງໆ ພ້ອມດ້ວຍບັນຊີຄຳສັບຍາກ ກໍແມ່ນ: ມະຫາກາບ ທ້າວເຈືອງ (ເຫລັ້ມ 1 ແລະ 2)[11] ການຈັດພິມຄັ້ງນີ້ ເຖິງວ່າໄດ້ອີງໃສ່ສະບັບຈັດພິມຄັ້ງແຮກ (ເປັນອັກສອນໄທ) ປີ 1942 ຂອງ ມະຫາສິລາ ກໍຫາກສະແດງເຖິງບາດກ້າວສຳຄັນນຶ່ງ ດ້ວຍວ່າ ບົດກະວີຖືກກວດທຽບດ້ວຍຄວາມຖີ່ຖ້ວນໃສ່ກັບຕົ້ນສະບັບລາຍມືຂຽນ ແລະ ສຳເນົາໃບລານ ທີ່ຂຽນເປັນອັກສອນລາວບູຮານ, ເຊິ່ງເທົ່າທີ່ຮູ້ໃນປະຈຸບັນເປັນສະບັບດຽວທີ່ຖືກຮັກສາໄວ້ຢູ່ໃນຫໍສະໝຸດແຫ່ງຊາດໄທ

ໃນລະຫວ່າງດຳເນີນການຄົ້ນຄວ້າ 3 ໂຄງການ ຂອງນັກຄົ້ນຄວ້າ ຄະນະພາສາ ແລະ ວັນນະຄະດີລາວ, ມະຫາວິທະຍາໄລແຫ່ງຊາດລາວ, ແລະ ດ້ວຍການຮ່ວມມືກັບສາສະດາຈານ ໂຟກເກີ ກຣາໂບຊະກີ, ມະຫາວິທະຍາໄລ ມູນສເຕີ ປະເທດເຢີຣະມັນ, ບົດກອນປະຫວັດສາດ 2 ເລື່ອງ ກໍໄດ້ພິມອອກ ຄື: ການເມືອງພວນ ແລະ ສານລຶບພະສູນ ການຈັດພິມຜົນງານທັງສອງ ປະກອບດ້ວຍຄຳນຳທີ່ໃຫ້ຂໍ້ມູນ ແລະ ບັນຊີຄຳສັບ ແລະອີກບໍ່ດົນ ຜົນງານສຳຄັນອີກອັນນຶ່ງກໍຈະຕາມມາ ຄື ພື້ນວຽງ. ບົດເລື່ອງຂອງຜົນງານອັນສຸດທ້າຍໄດ້ອີງໃສ່ເອກະສານກ່າຍຈາກສະບັບຢູ່ລາວ ແລະ ພາກຕາເວັນອອກສຽງເໜືອ ຂອງປະເທດໄທ. ທັງສອງໂຄງການທີ່ກ່າວມາຂ້າງເທິງນັ້ນ ໄດ້ຮັບການຊ່ອຍເຫລືອຂອງ ມູນນິທິໂຕໂຢຕາ ປະເທດ ຍີ່ປຸ່ນ[12]

---

[11] ພາກສອງ ພວມຢູ່ໃນລະຫວ່າງການກຽມຈັດພິມ ຄົງຈະອອກມາໄວໆນີ້

[12] ສຳລັບການຄົ້ນຄວ້າ ກ່ຽວກັບປະເທດລາວ ຢູ່ໃນຂົງເຂດມານຸດວິທະຍານັ້ນ, ຂໍ້ມູນທີ່ເປັນປະໂຫຍດ ກ່ຽວກັບຜົນງານການຂຽນ ມາເຖິງຕົ້ນຊຸມປີ 90 ມີຢູ່ໃນປຶ້ມຂອງ P.-B. Lafont (ed.), les recherches en sciences humaines sur le Laos (Actes de la Conférence Internationale organisée à Vientiane 7-10 décembre 1993), Paris 1994

ບັດນີ້ ໃນເມື່ອພາລະກິດປົກປັກຮັກສາ ມໍລະດົກວັນນະຄະດີລາວຂັ້ນພື້ນຖານ ໄດ້ສຳເລັດລຸລ່ວງໄປແລ້ວ ເພື່ອກອບກູ້ວັນນະຄະດີລາວ ແລະ ເອກະລັກທາງວັດທະນະທັມຂອງຕົນ ໄວ້ໃຫ້ຍືນຍົງຄົງຕົວກໍຍັງມີຄຳຖາມທີ່ຈະຕ້ອງຫາຄຳຕອບ ດັ່ງຕໍ່ໄປນີ້ :

(1) ຈະຕ້ອງດຳເນີນບາດກ້າວອັນໃດແດ່ ເພື່ອເຮັດໃຫ້ຄຸນຄ່າຄຸນນະທັມ ພູມປັນຍາ ແຫ່ງວັນນະຄະດີພື້ນເມືອງ ກັບມາມີຊີວິດຊີວາ ແລະ ແຊກຊຶມຢູ່ໃນສັງຄົມຍຸກໃໝ່ ?

(2) ຈະຕ້ອງຄົ້ນຫາແລວທາງອັນໃດ ເພື່ອດຳເນີນກິດຈະກຳຄົ້ນຄວ້າ ອັນມີປະສິດທິຜົນ ໃນອະນາຄົດ ແລະຈະຕ້ອງວາງມາຕະການຈຳເປັນອັນໃດ ເພື່ອຂະຫຍາຍ ແລະສົ່ງເສີມສັກກະຍະພາບຂອງ ນັກຄົ້ນຄວ້າລາວ ຢູ່ໃນວົງການສຶກສາ ພາສາ ແລະ ວັນນະຄະດີລາວ ?

(3) ຕ້ອງຈັດວາງວິຊາຮຽນພາສາ, ວັນນະຄະດີ ແລະ ວັດທະນະທັມລາວ ໄວ້ໃນສະຖານະພາບໃດຢູ່ໃນລະບົບການສຶກສາຂອງລາວ ໃນນັ້ນ ນັບທັງຂັ້ນປະຖົມ ແລະ ມັດທະຍົມນຳ ?

(4) ເຮັດແນວໃດ ການສຶກສາພາສາ ແລະ ວັນນະຄະດີເກົ່າແກ່ ຈຶ່ງຈະມີສ່ວນຊ່ອຍໃນການຊັ່ງຊາດຸ່ນດ່ຽງກັບອິດທິພົນຂອງສື່ບັນເທີງແບບລ້ຳສະໄໝໄຮເຕັກ ທີ່ພວມລຸຫລັ່ງທົ່ງຖ້ວມເຂົ້າມາໃນປະເທດ ໂດຍຜ່ານສື່ຂອງຕ່າງປະເທດ ແລະ ລະບົບອິນເຕີແນຕໄດ້[13] ?

(5) ເຮັດແນວໃດ ຄວາມຮັບຮູ້ຊາບຊຶ້ງ ໃນຄວາມງົດງາມອັນສຸນທອນຂອງພາສາ ແລະ ບົດກະວີລາວບູຮານ ຈຶ່ງຈະຝັງແໜ້ນ ແລະ ຫລໍ່ຫລອມຈິດໃຈ ໂດຍສະເພາະແລ້ວ ຂອງຄົນຣຸ່ນໜຸ່ມ ?

---

[13] ທ່ານທັງຫລາຍຄົງຈະເຫັນພ້ອມວ່າ ແມ່ນກະໂຕ "ວັດທະນະທັມ" ແຫ່ງໂລກາພິວັດ ແລະ ບໍລິໂພກນິຍົມນັ້ນເອງ ທີ່ພວມຖ້ວມທົ້ນເຂົ້າມາຄອບຄອງຫົວໃຈຊາວໜຸ່ມ ແລະ ພວມຍໍ່າຂູ່ຢ່າງຮ້າຍແຮງທີ່ສຸດ ຕໍ່ການຢູ່ລອດຂອງ "ພູມປັນຍາຂອງບັນພະບຸລຸດ" ແລະ "ຄວາມດີ- ຄວາມງາມ" ຂອງ ອະດີດຕະການ

## ແລວທາງການຄົ້ນຄວ້າທີ່ເປັນໄປໄດ້ໃນອະນາຄົດ

ດ້ວຍການມີຄັງສາງໄມໂຄຼຟິມ ເຊິ່ງບັນຈຸເອກະສານສຳຄັນໄວ້ປະມານ 9,600 ເລື່ອງ ນັກວິຊາການສາມາດເຂົ້າເຖິງຂໍ້ມູນປະຖົມຢ່າງສະດວກ ດັ່ງນີ້ ຈຶ່ງເອື້ອອຳນວຍໃຫ້ນຳສະເໜີບາງແນວຄວາມຄິດ ກ່ຽວກັບແລວທາງການຄົ້ນຄວ້າ ທີ່ເປັນໄປໄດ້ໃນອະນາຄົດ ດັ່ງຕໍ່ໄປນີ້ :

- ເຮັດປຶ້ມບັນຊີທີ່ມີຄຳອະທິບາຍ ເອກະສານໃບລານ ທີ່ຖ່າຍໄມໂຄຼຟິມໄວ້ ລະຫວ່າງສິບປີຜ່ານມາ
- ສຶກສາ ຊົມໃຊ້ຂໍ້ມູນໃນໄມໂຄຼຟິມ ສຳລັບການຄົ້ນຄວ້າ ໃນຂົງເຂດປະຫວັດພາສາສາດ ເຊັ່ນວ່າ: ປະຫວັດການຂະຫຍາຍຕົວຂອງພາສາລາວ: ສັບທານຸກົມ, ສຳນວນປະໂຫຍກ ພາສາໃຊ້ປະຈຳວັນ ແລະ ອື່ນໆ
- ການຄົ້ນຄວ້າປຽບທຽບ "ພາສາເອື້ອຍນ້ອງ" ຂອງລາວ ເຊັ່ນ: ລ້ານນາໄທ, ໄທເຂີນ, ໄທລື້ ແລະ ໄທດຳ
- ສຶກສາກ່ຽວກັບ ພາສາ ແລະ ວັນນະຄະດີ ຂອງໄຕເໜືອ
- ສຶກສາປະຫວັດສາດ ຂອງສາດສະໜາພຸດໃນລາວ
- ສຶກສາດ້ານອັກສອນສາດ: ວິໄຈ (ອາດຈະຈັດພິມ) ຜົນງານເລືອກເຟັ້ນ ໂດຍບໍ່ໃຊ້ແຕ່ສະບັບນຶ່ງສະບັບດຽວ ແຕ່ໃຊ້ຫລາຍສະບັບ (ສະບັບກ່າຍ) ມາສຶກສາປຽບທຽບ ຖ້າວ່າເໝາະສົມດ້ວຍການໃຊ້ "ຫລັກວິນິດໄສຕົ້ນສະບັບ" ເພື່ອໃຫ້ກາຍເປັນ ຂໍ້ນິພົນທີ່ໃກ້ຄຽງກັບຕົ້ນສະບັບເດີມຫລາຍທີ່ສຸດ. ວິທີການນີ້ ອາດເປັນປະໂຫຍດຫລາຍ ເມື່ອທຳການວິໄຈຂໍ້ມູນສຳຄັນ ເຊັ່ນ: ຂໍ້ຂຽນກ່ຽວກັບ ປະຫວັດສາດ, ການຂຽນກ່ຽວກັບຄວາມສຳພັນດ້ານສັງຄົມ, ກົດໝາຍບູຮານ ຊີວິດປະຈຳວັນ ແລະ ແມ່ນແຕ່ເລື່ອງກ່ຽວກັບ ເສດຖະກິດ[14]

---

[14] ບໍ່ຄວນເບິ່ງຂ້າມ ທີ່ວັນນະຄະດີ ເຊັ່ນວ່າ ນິທານຊາດົກນອກນິບາດ ທີ່ມີແຜ່ກະຈາຍເຕັມໄປທົ່ວລັດພຸດໄຕ, ກໍສາມາດໃຫ້ຂໍ້ມູນຂ່າວສານລ້ຳຄ່າ ກ່ຽວກັບຄ່ານິຍົມທາງສັງຄົມ ເທົ່າໆກັບສະພາບເງື່ອນໄຂການດຳລົງຊີວິດແຕ່ລະວັນຢູ່ໃນອະດີດຕະການ ດັ່ງທີ່ຂ້າພະເຈົ້າໄດ້ພະຍາຍາມຂຽນອອກ ຢູ່ໃນບົດຄວາມ ຊື່ "Notions of Equity in Lan Na, Insights from Literary Sources;" ເບິ່ງ V. Grabowsky (ed.) *Regions and National Integration in Thailand 1892-1992*, Wiesbaden 1995

- ສຶກສາວິໄຈຄວາມສຳພັນ ລະຫວ່າງນິທານ ສຳນວນຂອງວັດ ກັບສຳນວນຊາວບ້ານ ເຊັ່ນນິທານຊາດົກນອກນິບາດ ຄື ສິບໄຊ ຈຳປາສີ່ຕົ້ນ ຫລື ທີ່ເອີ້ນວ່າ ປັນຍາສະຊາດົກ ຊຸດນິທານນອກນິບາດ ກ່ຽວກັບອະດີດຊາດຂອງພະພຸທະອົງ ທີ່ໂດ່ງດັງໃນສັງຄົມ ຂອງຊາວພຸດແຜ່ນດິນໃຫຍ່ແຫ່ງ ອາຊີຕາເວັນອອກສຽງໃຕ້
- ສຶກສາຄົ້ນຄວ້າການເຜີຍແຜ່ ຫລືການ "ເຄື່ອນຍ້າຍ" ໜັງສືໃບລານ ຜົນງານທາງວັນນະຄະດີເຊິ່ງກໍໝາຍເຖິງ ການອົບພະຍົບເຄື່ອນຍ້າຍ ຜູ້ຄົນທີ່ຫອບຫິ້ວເອົາໜັງສືໃບລານ ຜ່ານຜ່າ "ອົງເຂດວັດທະນະທັມລາວໃຫຍ່ " ແລະ ບາງຄັ້ງກໍໄປຮອດເຂດໄທພາກກາງ
- ສຶກສາຄົ້ນຄວ້າເລື່ອງ ຄວາມສຳພັນລະຫວ່າງ ນິທານຊາດົກນອກນິບາດ ສຳນວນພາສາປາລີ, ນິໄສ ຫລືສຳນວນໂວຫານໃນດ້ານນຶ່ງ, ສ່ວນອີກດ້ານນຶ່ງ ກໍເບິ່ງເລື່ອງການຂຽນແຕ່ງຂອງຊາວບ້ານ ທັງອັນທີ່ເປັນສຳນວນສືບທອດທາງປາກເປົ່າ ຜ່ານ "ເຂດວັດທະນະທັມລາວ" ແລະໄທພາກກາງ
- ສຶກສາປຽບທຽບ ຜົນງານວັນນະຄະດີລາວ ໃສ່ກັບເລື່ອງທີ່ພົບຢູ່ໃນພາກກາງຂອງປະເທດໄທ, ພາກເໜືອ ຂອງປະເທດໄທ ມຽນມ່າ ສິບສອງປັນນາ ຫລືກຳປູເຈຍ
- ສຶກສາເລື່ອງ ດາຣາສາດ, ໄສຍະສາດ, ພູມປັນຍາຊາວບ້ານ ເຊັ່ນ ຢາຮາກໄມ້, ຕຳລາຢາ ແລະການເຢົາ
- ແລະ ອື່ນ ໆ

## **ຂໍ້ສະຫລຸບ**

ບັດນີ້ ສົມຄວນແກ່ເວລາ ທີ່ຈະຕ້ອງປະເມີນຜົນໄດ້ຮັບຜ່ານມາ ແລະ ພິຈາລະນາວ່າ ຄວນຈະເຮັດແນວໃດເພື່ອຮັບປະກັນໃຫ້ມີການສານຕໍ່ ເພື່ອໃຫ້ມໍລະດົກວັນນະຄະດີຂອງຊາດລາວ ໄດ້ຢູ່ໃນຖານະທີ່ຖືກຕ້ອງເໝາະສົມທັງໃນປະເທດຕົນເອງ ໃນບໍລິບົດວັດທະນະທັມຂອງອາຊີອາຄະເນ ແລະ ວັດທະນະທັມຂອງໂລກ.




**Map showing the Greater Lao Cultural Domain, with major centres shown in red.**

ແຜນທີ່ສະແດງຂົງເຂດວັດທະນະທັມລາວໃຫຍ່  ຈຸດສີແດງໝາຍເຖິງສູນກາງສຳຄັນໆ